ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ  ເລກທີ 1152 ຫສນຍ.ກລຂ

ນະຄອນຫລວງວຽງຈັນ, ວັນທີ 9 - 8 - 2016

## ແຈ້ງການ

---

**ຮຽນ :** - ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ທີ່ນັບຖື.
- ທ່ານລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ.
- ທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.
- ທ່ານລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່.
- ທ່ານລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ.

**ເລື່ອງ :** ການຢຸດເຊົາການຍົກເວັ້ນພາສີ-ອາກອນນຳເຂົ້າ ສຳລັບນ້ຳມັນເຊື້ອໄຟຂອງບັນດາໂຄງການຕ່າງໆໃນຂອບເຂດທົ່ວປະເທດ.

- ອີງຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 04/ສພຊ, ລົງວັນທີ 26 ທັນວາ 2006.
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 08 ກໍລະກົດ 2009.
- ອີງຕາມກົດໝາຍວ່າດ້ວຍພາສີ(ສະບັບປັບປຸງ)ເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011.
- ອີງຕາມມະຕິກອງປະຊຸມສະພາແຫ່ງຊາດ ຊຸດທີ VIII ສະບັບເລກທີ 07/ສພຊ, ລົງວັນທີ 22 ເມສາ 2016.
- ອີງຕາມບົດບັນທຶກກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 1-2 ສິງຫາ 2016.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້ :

**"1). ເລີ່ມແຕ່ເດືອນສິງຫາປີ 2016 ເປັນຕົ້ນໄປ ລັດຖະບານ ຈະບໍ່ອະນຸຍາດໃຫ້ຍົກເວັ້ນພາສີ-ອາກອນ ສຳລັບການນຳເຂົ້ານ້ຳມັນເຊື້ອໄຟທຸກຊະນິດຂອງບັນດາໂຄງການຕ່າງໆໃນຂອບເຂດທົ່ວປະເທດ.**

**2). ສຳລັບໂຄງການໃດ ທີ່ໄດ້ຮັບການຍົກເວັ້ນໃນໄລຍະຜ່ານມາ ແມ່ນໃຫ້ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການກວດກາ ແລະ ເຈລະຈາຄືນໃໝ່ ເພື່ອເຮັດແນວໃດໃຫ້ທຸກໆພາກສ່ວນຕ້ອງຫັນເຂົ້າມາສູ່ການປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ.**

---

3). ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບພາກສ່ວນກ່ຽວຂ້ອງ ກວດກາຄືນບັນດາ ບໍລິສັດ ທີ່ດຳເນີນທຸລະກິດນ້ຳມັນເຊື້ອໄຟ, ນັບທັງການນຳເຂົ້າ-ສົ່ງຜ່ານ ແລະ ບັນດາໂຮງງານກັ່ນນ້ຳມັນ ໃນຂອບເຂດທົ່ວປະເທດ ມີປະສິດທິຜົນແນວໃດ ແລະ ບັນຫາຕ່າງໆ ແລ້ວລາຍງານໃຫ້ລັດຖະບານ."

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

<u>ບ່ອນນຳສົ່ງ :</u>

- ນາຍົກ-ຮອງນາຍົກ 04 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ເກັບມ້ຽນ 08 ສະບັບ

ສຳນັກງານນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ເພັດ ພົມພິພັກ